ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 19 ຫາ 23 ກຸມພາ 2024



ທ່ານຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ລົງພົບປະ ແລະ ຊີ້ນຳວຽກງານ ຊົນລະປະທານ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ທ່ານຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ລົງເຄື່ອນໄຫວພົບປະ ແລະ ຊີ້ນຳວຽກງານຊົນລະປະທານ

ໃນວັນທີ 14 ກຸມພາ 2024 ນີ້ ທີ່ກົມຊົນລະປະທານ, ກະຊວງກະສິກຳ ແລະ ປ່າໄມ້ ທ່ານ ທອງພັດ ວົງມະນີຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ລົງເຄື່ອນໄຫວ ພົບປະ ແລະ ໃຫ້ທິດຊີ້ນຳຕໍ່ກັບການຈັດຕັ້ງວຽກງານຊົນລະປະທານ, ກອງປະຊຸມຄັ້ງນີ້ ທ່ານ ປອ. ຄຳພະຈັນ ວົງຊະນະ ຫົວໜ້າກົມຊົນລະປະທານ ໄດ້ລາຍງານສະພາບລວມ ຂອງການຈັດຕັ້ງປະຕິບັດວຽກງານພັດທະນາຊົນລະປະທານ ປະຈຳປີ 2023 ແລະ ທິດທາງແຜນການປີ 2024, ໃຫ້ຮູ້ວ່າ: ທົ່ວປະເທດມີໂຄງການຊົນລະປະທານທັງໝົດ 19.494 ແຫ່ງ. ໃນນັ້ນ, ຝາຍນ້ຳລົ້ນ 4.972 ແຫ່ງ, ອ່າງເກັບນ້ຳ 333 ແຫ່ງ, ຈັກສູບນ້ຳ 1.784 ແຫ່ງ, ປະຕູນ້ຳ ແລະ ຄູກັນນ້ຳ 504 ແຫ່ງ, ຊົນລະປະທານປອງຊົນ 11.901 ແຫ່ງ. ສາມາດສະໜອງນ້ຳຊົນລະປະທານໃຫ້ເນື້ອທີ່ການຜະລິດໃນປີ 2023 ໄດ້ 507.146 ເຮັກຕາ (ລະດູແລ້ງ 189.738 ເຮັກຕາ-ລື່ນແຜນ 12,9% ແລະ ລະດູຝົນ 317.408 ເຮັກຕາ-ລື່ນແຜນ 12,2%). ຜ່ານມາກົມຊົນລະປະທານໄດ້ລົງສົມທົບກັບທ້ອງຖິ່ນກວດກາ, ເກັບກຳຂໍ້ມູນຜົນເສຍຫາຍ ຂອງໂຄງການຊົນລະປະທານ ໄດ້ຮັບຜົນກະທົບຈາກອຸທົກກະໄພ ແລ້ວລາຍງານຕໍ່ການນຳຂອງແຂວງ, ການນຳກະຊວງ, ວາງແຜນສະເໜີ-ຍາດແຍ່ງແຫຼ່ງທຶນ ເພື່ອມາຟື້ນຟູສ້ອມແປງລະບົບຊົນລະປະທານທີ່ເປ່ເພຄືນ ເພື່ອກອບກູ້ເນື້ອທີ່ການຜະລິດ, ເຊິ່ງໄດ້ສຳເລັດການກໍ່ສ້າງ ແລະ ຟື້ນຟູ-ສ້ອມແປງມີທັງໝົດ 158 ໂຄງການ, ຕິດຕາມຊຸກຍູ້ການກໍ່ສ້າງບັນດາໂຄງການລົງທຶນຂອງລັດຢ່າງເປັນປົກກະຕິ ລວມທັງໝົດ 23 ໂຄງການ ໃນນີ້ ທຶນພາຍໃນ 9 ໂຄງການ, ທຶນຕ່າງ ປະເທດ 14 ໂຄງການ (133 ໂຄງການ ຍ່ອຍ), ໄດ້ກຳນົດໂຄງການຊົນລະປະທານ ຈຳນວນ 482 ໂຄງການເປັນໂຄງການຈຸດສຸມວາລະແຫ່ງຊາດ ໃນນັ້ນຊົນລະປະທານ ນ້ຳໄຫຼເອງ 296 ໂຄງການ, ຈັກສູບນ້ຳ 186 ໂຄງການ ເພື່ອຮັບປະກັນການສະໜອງນ້ຳໃຫ້ແກ່ເນື້ອທີ່ການຜະລິດລະດູຝົນ 93.318 ເຮັກຕາ ແລະ ລະດູແລ້ງ 66.566 ເຮັກຕາ ໃນການຈັດຕັ້ງປະຕິບັດຕົວຈິງ ປີ 2022 ບັນລຸໄດ້ 182.857 ເຮັກຕາ (ລະດູຝົນ 96.557 ເຮັກຕາ ແລະລະດູແລ້ງ 86.300 ເຮັກຕາ) ລື່ນແຜນ 14.30%, ການຈັດຕັ້ງປະຕິບັດ




ວາລະແຫ່ງຊາດ ກໍໄດ້ດຳເນີນການກໍ່ສ້າງຊົນລະປະທານນຳໃຊ້ພະລັງງານແສງຕາເວັນ ເພື່ອຊ່ວຍລົດຕົ້ນທຶນການຜະລິດຂອງປະຊາຊົນໄດ້ 25 ແຫ່ງ ສາມາດສະໜອງນ້ຳໃຫ້ແກ່ເນື້ອທີ່ການຜະລິດໄດ້ 927 ເຮັກຕາ, ໃນປີ 2024 ກົມຊົນລະປະທານ ໄດ້ວາງຄາດໝາຍສູ້ຊົນການສະໜອງນ້ຳໃຫ້ແກ່ການຜະລິດລະດູຝົນໃຫ້ໄດ້ 452.800 ເຮັກຕາ (ລະດູຝົນ 283.800 ເຮັກ ຕາ ແລະລະດູແລ້ງ 169.000 ເຮັກຕາ), ໃນຕອນທ້າຍຂອງກອງປະຊຸມທ່ານຮອງລັດມົນຕີກະຊວງ ກະສິກຳ ແລະ ປ່າໄມ້ ໄດ້ສະແດງຄວາມຊົມເຊີຍຕໍ່ໝາກຜົນ ແລະ ຜົນສຳເລັດຂອງການຄະນະພັກຮາກຖານກົມຊົນລະປະທານທີ່ເຮັດບົດບາດໜ້າທີ່ຊີ້ນຳ-ນຳພາ ເຮັດໃຫ້ວຽກງານດຳເນີນ ແລະ ຜົນສຳເລັດເປັນກ້າວໆ ໃນຕໍ່ໜ້າ ແມ່ນເນັ້ນໃຫ້ສືບຕໍ່ສູ້ຊົນຕາມແຜນການທີ່ຕັ້ງເປົ້າໝາຍໄວ້ ເພາະວຽກຊົນລະປະທານເປັນວຽກທີ່ມີຄວາມຈຳເປັນ ແລະ ສຳຄັນ ເຫັນໄດ້ວ່າການສະໜອງນ້ຳທີ່ເຮົາສາມາດສະໜອງໄດ້ຖ້າທຽບໃສ່ຄວາມຕ້ອງການຂອງພື້ນທີ່ກະສິກຳໃນທົ່ວປະເທດແມ່ນຍັງກວມແຕ່ 14-15 ສ່ວນຮ້ອຍ ສະນັ້ນເພື່ອເຮັດແນວໃດໃຫ້ການຜະລິດຫຼຸດຜ່ອນການເອື່ອຍອີງແຕ່ທຳມະຊາດ ດິນຟ້າອາກາດມີການປ່ຽນແປງໃນທຸກໆປີ ບາງປີແລ້ງບາງປີ ຝົນຫຼາຍ ໃຫ້ສະໜອງນ້ຳໃຫ້ຊາວກະສິກອນໄດ້ສາມາດທຳການຜະລິດໃຫ້ເປັນເສດຖະກິດຢ່າງເປັນປົກກະຕິເພື່ອສ້າງລາຍຮັບໃຫ້ແກ່ປະເທດຊາດ ແລະ ວຽກງານຄ້ຳປະກັນສະບຽງອາຫານຂອງຊາດ, ພ້ອມດຽວກັນນີ້ກໍໃຫ້ສືບຕໍ່ຕິດຕາມກວດກາບັນດາໂຄງການກໍ່ສ້າງທີ່ໄດ້ຮັບທຶນກູ້ຢືມ ທຶນຊ່ວຍເຫຼືອໃຫ້ນຳໃຊ້ໄດ້ຢ່າງມີປະສິດທິພາບ ແລະ ໃຫ້ໄດ້ຄຸນນະພາບ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນວນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ;